**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຄະນະກຳມາທິການແຫ່ງຊາດ**
**ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ**

ເລກທີ 058 /ຄຊກມດ
ນະຄອນຫຼວງວຽງຈັນ, ວັນທີ 12 ພຶດສະພາ 2025

# ຄຳແນະນຳ

**ຮຽນ:** - ບັນດາທ່ານຮອງລັດຖະມົນຕີ, ຮອງປະທານອົງການ, ປະທານ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງ, ອົງການທຽບເທົ່າກະຊວງ.
- ບັນດາທ່ານຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ປະທານ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແຂວງ ແລະ ນະຄອນຫຼວງວຽງຈັນ.

**ເລື່ອງ:** ການສ້າງຂະບວນການສະເຫຼີມສະຫຼອງວັນເດັກສາກົນ (01 ມິຖຸນາ), ສະເຫຼີມສະຫຼອງ ວັນສົນທິສັນຍາວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ 2025.

- ອີງຕາມ ດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 19/ນຍ, ລົງວັນທີ 25 ມັງກອນ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ.
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 658/ຫສນຍ, ລົງວັນທີ 23ເມສາ 2025 ກ່ຽວກັບ ການອະນຸມັດທາງດ້ານຫຼັກການ ໃຫ້ສະເຫຼີມສະຫຼອງ ວັນເດັກສາກົນ (01 ມິຖຸນາ) ແລະ ສະເຫຼີມສະຫຼອງ ວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ 2025.

ເພື່ອຮັບປະກັນການສະເຫຼີມສະຫຼອງ ວັນເດັກສາກົນ (01 ມິຖຸນາ) ແລະ ສະເຫຼີມສະຫຼອງ ວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ 2025 ໃຫ້ເປັນຂະບວນກວ້າງຂວາງໃນຂອບເຂດທົ່ວປະເທດ ໃຫ້ມີເນື້ອໃນ, ຫຼາຍຮູບການ ແລະ ມີຜົນສຳເລັດຕາມຈຸດປະສົງ ຄາດໝາຍທີ່ວາງໄວ້. ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ (ຄຊກມດ) ອອກຄຳແນະນຳ ເຖິງ ຄກມດ ທຸກຂັ້ນ ກ່ຽວກັບການຈັດຕັ້ງຂະບວນການເພື່ອສະເຫຼີມສະຫຼອງວັນດັ່ງກ່າວເຫຼົ່ານັ້ນໃຫ້ເໝາະສົມ ແລະ ແທດເໝາະກັບສະພາບເງື່ອນໄຂຕົວຈິງຂອງຂະແໜງການ ແລະ ທ້ອງຖິ່ນຕົນ ຜ່ານກິດຈະກຳຕ່າງໆ ດັ່ງນີ້:

1) **ການສະເຫຼີມສະຫຼອງ ວັນເດັກສາກົນ (01 ມິຖຸນາ) 2025:**
   - ຈັດຕັ້ງເຜີຍແຜ່ ສານທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ຕໍ່ວັນເດັກສາກົນ, ປະຫວັດຄວາມເປັນມາຂອງວັນເດັກສາກົນ.
   - ຈັດກິດຈະກຳຮ່ວມກັບເດັກ ແລະ ກິດຈະກຳຕ່າງໆ ຕາມສະພາບຄວາມເປັນຈິງ ແລະ ແທດເໝາະກັບຂະແໜງການ ແລະ ທ້ອງຖິ່ນ.

2) **ວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ) 20 ພະຈິກ ປະຈຳປີ 2025:**

- ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ເປັນຕົ້ນ: ສົນທິສັນຍາ ວ່າດ້ວຍ ສິດທິເດັກ ແລະ ສອງອະນຸສັນຍາເພີ່ມເຕີມ ລວມທັງ ວິໄສທັດໃນການພັດທະນາເດັກລາວ ລຸ້ນປີ 2030.
- ສະຫຼຸບການຈັດຕັ້ງປະຕິບັດຄວາມໝາຍໝັ້ນ ວຽກສິດທິເດັກ ໃນ ສປປ ລາວ ແລະ ການຫຼຸດຜ່ອນຄວາມທຸກຍາກຂອງເດັກໃນຫຼາຍມິຕິ.
- ຈັດກິດຈະກຳທີ່ເປັນການສົ່ງເສີມ ກ່ຽວກັບສິດທິເດັກຕາມເງື່ອນໄຂ ແລະ ສະພາບຕົວຈິງ.

ສຳລັບງົບປະມານໃນການຈັດຕັ້ງປະຕິບັດມອບໃຫ້ບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ຈັດສັນງົບປະມານຕາມຄວາມເໝາະສົມ ແລະ ລະດົມການປະກອບສ່ວນຂອງພາກສ່ວນຕ່າງໆ ແລະ ການສະໜັບສະໜູນທຶນຈາກອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມຢູ່ພາຍໃນ ແລະ ຕ່າງປະເທດ.

ດັ່ງນັ້ນ, ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຈຶ່ງໄດ້ອອກຄຳແນະນຳສະບັບນີ້ ມາຍັງທ່ານເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ເຊັນແທນປະທານ**

**ຮອງປະທານ ຜູ້ປະຈຳການ**

ປະທານ

ນ. ອາລີ ວົງໜໍ່ບຸນທັງ